**LIWG Weekly news update from 12-16/2/2018**

**………..**

**ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 12-16/2/2018 ໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ**

# English news

**Laos, China, Thailand to hold talks on rail link: Vientiane Times**

February 13, 2018

Laos, China and Thailand are set to hold talks in moves to ensure the rail systems set to traverse the three countries can link smoothly and efficiently.

The discussion will be aimed at ensuring construction of the two rail systems is coordinated so they can link smoothly.

Construction of the 409-km Laos-China railway project linking the Laos-China border to the capital has been 20.3 percent completed as of December 2017.

The US$5.986 billion rail line will form part of the planned regional railway network linking China's Yunnan province and its capital Kunming to Singapore via Laos, Thailand and Malaysia.

*Read article from Bangkok post for: Laos to join high-speed rail talks*

**Attapeu province eyeing private investment to boost growth: Vientiane Times**

***February 14, 2018***

Attapeu provincial authorities are seeking to boost private investment in order to accomplish their five-year socio-economic development plan from 2016-2020.

In order to sustain economic growth in the province, Mr Soulichan reaffirmed that Attapeu would need to proactively attract additional private domestic and foreign investment which currently represented 60 percent of total investment in the province.

Foreign companies are mainly investing in hydropower, tourism development and resource sector projects.

**Chinese Firm Authorised to Develop Vangvieng Airport as Tourism Complex: KPL**

***February 15, 2018***

The authorities of Vientiane Province has authorized the Chinese company Ichin Engineering & Construction Lao a 50-year concessional right to develop abandoned Vangvieng Airport as a US$ 200-million tourist complex featuring a five-star hotel, a hospital, a tourism school, a multi-ethnic cultural theater, and a casino, among others.

The complex which will be built in a place of the 16-ha airport is expected to help attract more Chinese tourists and visitors from around the world to touristic Vangvieng.

The construction of the tourism complex will take 5 years.

**2017 Destroys Almost 130 UXOs Out of Laos-China Construction Railway: KPL**

***February 15, 2018***

Last year, Unexploded Ordnance (UXO) Clearance and Destroy Committee for Laos-China Railway Construction Project destroyed almost 130 UXOs along railway from Boten border to Vientiane Capital.

The UXOs and 211,560 exploded items and scraps are scattered on a total area of 1,026 hectares that needed to remove and destroy.

The committee set up a UXO clearance mobile team to destroy UXO in the fields for emergency as continue a plan of UXO clearance contractor companies to inspect and clear UXO out of 1,798 hectares along construction areas this year.
*Read article on Vientiane Times for* *ongoing Lungprabang's UXO ordeal*

## ຂ່າວພາສາລາວ

**ລາວ ຢາກເປີດໃຊ້ ຣົດໄຟ ພ້ອມສລອງວັນຊາດ: ວິທະຍຸ ອາຊີເສຣີ**

***ວັນທີ 12 ກຸມພາ 2018***

ນາຍົກຣັຖມົນຕຣີລາວ ສເນີໃຫ້ຈີນ ສ້າງ ທາງຣົດໄຟ ລາວ-ຈີນ ໃຫ້ສໍາເຣັດກ່ອນ ຫຼື ໃນມື້ວັນທີ 2 ທັນວາ 2021 ເພື່ອເປັນການ ສລອງ ວັນຄົບຮອບ 46 ປີ ຂອງການສ້າງຕັ້ງ ສາທາລະນະຣັຖ ປະຊາທິປະໄຕ ປະຊາຊົນລາວ. ການສ້າງທາງຣົດໄຟ ລາວ-ຈີນ ກໍາລັງດໍາເນີນໄປຢ່າງໄວວາ. ປັດຈຸບັນ ສ້າງໄປແລ້ວ 20.3 ສ່ວນຮ້ອຍ ແລະ ກໍາລັງເຈາະອຸໂມງ 53 ແຫ່ງ ໃນຈໍານວນທັງໝົດ 75 ແຫ່ງ ແລະ ສ້າງຂົວ 47 ແຫ່ງ ໃນຈໍານວນທັງໝົດ 167 ແຫ່ງ.
ແຕ່ເມື່ອເວົ້າເຖິງ ການຈ່າຍຄ່າທົດແທນ ຄວາມເສັຽຫາຍ ຂອງປະຊາຊົນນັ້ນ ແມ່ນຍັງບໍ່ທັນໄດ້ເທື່ອ ຊຶ່ງທ່ານ ໂພທອງ ໂງ່ນພະຈັນ, ນຶ່ງໃນ ຄະນະກັມມະການ ຄຸ້ມຄອງໂຄງການ ກໍ່ສ້າງທາງຣົດໄຟ ລາວ-ຈີນ ກໍຍອມຮັບວ່າ ຍັງບໍ່ທັນໄດ້ມີການ ຈ່າຍຄ່າຊົດເຊີຍ ໃຫ້ແກ່ຜູ້ເສັຽ ເນື້ອທີ່ດິນ ແລະ ຊັບສິນ ຕາມແລວໂຄງການ ກໍ່ສ້າງທາງ ຣົດໄຟນັ້ນເທື່ອ ເພາະການທົດແທນນັ້ນ ມີຫຼາຍຂັ້ນຕອນ ແລະ ຍັງເປັນບັນຫາ ທີ່ຕ້ອງໃຊ້ເວລາ

**ຊາວບ້ານຢືບ 14 ຄົນ ທີ່ຖືກຂັງ 1 ຄົນ ເສັຽຊີວິດ: ວິທະຍຸ ອາຊີເສຣີ**

***ວັນທີ 9 ກຸມພາ 2018***

ຊາວບ້ານຢືບ ເມືອງທ່າແຕງ ແຂວງເຊກອງ ຈໍານວນ 14 ຄົນ ທີ່ຖືກຈັບຂັງ ຍ້ອນຂໍ້ຂັດແຍ້ງ ທີ່ດິນເມື່ອປີກາຍ ຍັງຖືກກັກຂັງຢູ່ ແລະມີ 1 ຄົນ ໃນນັ້ນຄື; ທ້າວສົມສະຫວັນ ໄດ້ເສັຍຊີວິດ ຢູ່ໃນຄຸກ ເມື່ອວັນທີ່ 29 ເດືອນມົກກະຣາ ທີ່ຜ່ານມາ.
ເຈົ້າໜ້າທີ່ຕໍາຣວດແຂວງເຊກອງ ບອກຍາດພີ່ນ້ອງຂອງຊາວບ້ານຜູ້ເສັຽຊີວິດ ນັ້ນວ່າ ທ້າວສົມສະຫວັນ ຂ້າໂຕຕາຍ ເພາະຜູ້ກ່ຽວມີຮອຍຊໍ້າ ຢູ່ເທິງໜ້າເອິກ. ເຈົ້າໜ້າທີ່ໄດ້ເຮັດພິທີຊາປະນະກິດ ຜູ້ກ່ຽວແລ້ວ ບໍ່ໄດ້ສົ່ງສົບໃຫ້ຄອບຄົວ ແລະບໍ່ໄດ້ແຈ້ງໃຫ້ ຮູ້ຊໍ້າວ່າ ໄດ້ຈັດພິທີສົບມື້ໃດ.
ຊາວບ້ານຢືບ 14 ຄົນດັ່ງກ່າວ ຖືກເຈົ້າໜ້າທີ່ ທາງການແຂວງເຊກອງ ຈັບເມື່ອວັນ 25 ເດືອນ ກໍຣະກະດາ ປີ 2017 ຍ້ອນມີຂໍ້ຂັດແຍ້ງ ທີ່ດິນ ກັບບໍຣິສັດຢາງພາຣາ ວຽດນາມ.
*ອ່ານຄໍາສໍາພາດລ່າສຸດ: ຂອງທ່ານ ຟິລ ກ່ຽວກັບປະເດັນດັ່ງກ່າວ ວັນທີ 13 ກຸມພາ 2018.*

ນັກລົງທຶນຈີນສໍາປະທານເດີນບິນເກົ່າວັງວຽງ ເພື່ອເນລະມິດໃຫ້ເປັນແຫຼ່ງທ່ອງທ່ຽວ: ຂ່າວໂດຍ ປະກາດ

***ວັນທີ 13 ກຸມພາ 2018***

ໃນວັນທີ 13 ກຸມພາ 2018 ນີ້ທີ່ພະແນກແຜນການ-ການລົງທຶນແຂວງວຽງຈັນ ໄດ້ມີພິທີເຊັນສັນຍາເພື່ອພັດທະນາເດີ່ນບິນເກົ່າເມືອງວັງວຽງໃຫ້ກາຍເປັນແຫຼ່ງທ່ອງທ່ຽວ ໄດ້ມີຂຶ້ນລະຫວ່າງບໍລິສັດອີຈີນວິສາວະກໍາກໍ່ສ້າງລາວຈໍາກັດ ກັບຫົວໜ້າພະແນກແຜນການ-ການລົງທຶນແຂວງວຽງຈັນໂດຍຊ້ອງໜ້າທ່ານ ວິດົງ ໄຊຍະສອນເຈົ້າແຂວງໆວຽງຈັນ.
ບັນດາກິດຈະກໍາຂອງໂຄງການຄື: ກໍ່ສ້າງໂຮງແຮມ5ດາວ,ໂຮງໝໍ,ໂຮງຮຽນທ່ອງທ່ຽວ,ຫໍສະແດງວັດທະນະທໍາປະເພນີຊົນເຜົ່າລາວເພື່ອເກັບປີ້ນັກທ່ອງທ່ຽວເຂົ້າຊົມ.
ໂຄງການນີ້ຖືກຈັດຕັ້ງປະຕິບັດຢູ່ເດີ່ນບິນເກົ່າເມືອງວັງວຽງໃນເນື້ອທີ່ 16,24ເຮັກຕາ ໄລຍະການກໍ່ສ້າງ5ປີ ແລະ ໄລຍະສໍາປະທານ 50ປີ ແລະ ມູນຄ່າການລົງທຶນທັງໝົດ200ລ້ານໂດລາ.

[ລັດຖະມົນຕີ ກະຊວງປ້ອງກັນປະເທດລົງຕິດຕາມການທຳລາຍ ລະເບີດທີ່ກວດກູ້ໄດ້ຕາມແລວທາງລົດໄຟລາວ-ຈີນ]: **ຂ່າວໂດຍ ຂ່າວສານປະເທດລາວ**

*ວັນທີ 15 ກຸມພາ 2018*

ຕາມການລາຍງານ, ໂຄງການການທຳລາຍລະເບີດ ທີ່ຕົກຄ້າງ ໃນປາງສົງຄາມ ທີ່ກວດກູ້ ໄດ້ຕາມແລວທາງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແຕ່ບໍ່ເຕັນເຖິງ ນະຄອນຫລວງວຽງຈັນ ໄດ້ປະຕິບັດສຳເລັດແລ້ວ 40%, ສາມາດ ກວດກູ້ລະເບີດບໍ່ທັນແຕກໄດ້ 128 ໜ່ວຍ, ໃນເນື້ອທີ່ 1.026,33ເຮັກຕາ, ເຊິ່ງການ ທຳລາຍຄັ້ງນີ້ໄດ້ຈັດຂຶ້ນ ຢູ່ 2 ຈຸດ ຄື: ຢູ່ເຂດເມືອງ ແຂວງຫລວງພະບາງ ແລະ ເຂດເມືອງວັງວຽງ ແຂວງວຽງຈັນ.

ປັດຈຸບັນ ການກວດກູ້ຕາມແລວທາງ ໄດ້ສຳເລັດແລ້ວກວ່າ 70 ກິໂລແມັດ ແລະ ຄາດວ່າ ການກວດກູ້ຈະໃຫ້ສຳເລັດໃນປີ 2019 ໃນໄລຍະທີ V.

*ອ່ານຂ່າວເພີ່ມເຕີມກ່ຽວກັບ: [ການເກັບກູ້ລະເບີດທີ່ແຂວງຫຼວງພະບາງໄດ້ເປັນຈຳນວນ 3,7 ພັນເຮັກຕາ].*

[ເຈົ້າໜ້າທີ່ທຳລາຍສວນຝິ່ນກວ່າ 75 ເຮັກຕາ ທີ່ເມືອງວຽງພູຄາ, ແຂວງຫຼວງນ້ຳທາ]: **ຂ່າວໂດຍ ອິດສະຫຼະ**

*ວັນທີ 16 ກຸມພາ 2018*

ໃນລະຫວ່າງວັນທີ 6-9 ກຸມພາ 2018 ທີ່ຜ່ານມາ ກອງບັນຊາການ ປກສ ເມືອງວຽງພູຄາ ແຂວງຫຼວງນ້ຳທາ ໄດ້ລົງສົມທົບກັບອົງການຈັດຕັ້ງທຸກພາກສ່ວນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອລົງທຳລາຍສ່ວນຢາຝິ່ນ ທີ່ປະຊາຊົນລັກລອບປູກຢູ່ຂອບເຂດເມືອງວຽງພູຄາ ແຂວງຫຼວງນ້ຳທາ ຈຳນວນ 76.65 ເຮັກຕາ.

ຂະບວນການທຳລາຍສວນຝິ່ນໃນຄັ້ງນີ້ ມີການເຂົ້າຮ່ວມຂອງທ່ານ ພັນໂທ ແອ່ ພົມມະວົງ ຮອງບັນຊາການ ປກສ ເມືອງວຽງພູຄາ, ທ່ານພັນໂທ ອາລຸນຍະເດດ ບົວສີສະຫວັດ ຫົວໜ້າພະແນກກວດກາຄວບຄຸມຢາເສບຕິດ ປກສ ແຂວງຫຼວງນ້ຳທາ, ມີຄະນະກອງບັນຊາການທະຫານເມືອງ, ກອງພັນ 418, ພະແນກກະສິກຳ ແລະ ປ່າໄມ້ເມືອງ, ອຳນາດການປົກຄອງຂອງບ້ານ, ນາຍບ້ານ, ກອງຫຼອນບ້ານ, ພະນັກງານສອງກຳລັງ ປກຊ-ປກສ ພ້ອມດ້ວຍຊາວໜຸ່ມ 3 ບ້ານເຂົ້າຮ່ວມທຳລາຍສວນຝິ່ນຈຳນວນດັ່ງກ່າວ.